ຄວາມຕົກລົງທາງການຄ້າ

ລະຫວ່າງ

ຣາຊອານາຈັກລາວ ກັບ ຣາຊອານາຈັກໄທ*

----++++----

ຣັຖບານແຫ່ງຣາຊອານາຈັກລາວ

ແລະ

ຣັຖບານແຫ່ງຣາຊອານາຈັກໄທ

ມີຄວາມປາຖນາຮ່ວມກັນ ທີ່ຈະກະຊັບສັມພັນທະໄມຕຣີ ແລະຄວາມຮ່ວມມືທີ່ມີຢູ່ລະຫວ່າງປະເທດທັງສອງ

ເຈຕນາທີ່ຈະອຳນວຍຄວາມສະດວກແກ່ຄວາມສັມພັນທາງການຄ້າ ລະຫວ່າງປະເທດທັງສອງ

ຈຶ່ງຕົກລົງກັນດັ່ງຕໍ່ໄປນີ້ :

ຂໍ້ ໑

ພາຄີທັງສອງຝ່າຍຈະໃຫ້ການປະຕິບັດຢ່າງອະນຸເຄາະເທົ່າທີ່ຈະທຳໄດ້ ເພື່ອການນຳເຂົ້າມາແລະສົ່ງອອກ ຊຶ່ງຜລິຕພັນທ໌ຂອງປະເທດທັງສອງ.

ຂໍ້ ໒

ພາຄີຝ່າຍນຶ່ງຈະບໍ່ໃຊ້ຣະບອບການເລືອກປະຕິບັດແກ່ການນຳເຂົ້າ ຊຶ່ງຜລິຕ-ພັນທ໌ ທີ່ມີກຳເນີດຫຼືມາຈາກອີກຝ່າຍນຶ່ງ ແລະການສົ່ງອອກຊຶ່ງຜລິຕພັນທ໌ຂອງອີກຝ່າຍນຶ່ງໄປຍັງອີກຝ່າຍນຶ່ງ.

ຂໍ້ ໓

ເພື່ອຮັກສາດຸລຍະການຄ້າລະຫວ່າງປະເທດທັງສອງເທົ່າທີ່ຈະທຳໄດ້ ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງທັງສອງຝ່າຍຈະຕິດຕໍ່ໃຫ້ຂ່າວສານຕ່າງ ໆ ທີ່ເປັນປະໂຍດຊຶ່ງກັນແລະກັນ ກ່ຽວກັບການຄ້າລະຫວ່າງປະເທດທັງສອງ.

*Source : Division of Treaties, Department of Treaties and Legal Affairs, Ministry of Foreign Affairs; see also Thai Text, pp. 23–25

ຂໍ້ ໔

ການຊໍາລະເງິນຄ່າຕລິດພັນທີ່ນໍາເຂົ້າຫຼືສົ່ງອອກ ຕາມຄວາມຕົກລົງນີ້ ໃຫ້ເປັນໄປຕາມຣະບຽບການຄວບຄຸມການແລກປ່ຽນເງິນຂອງແຕ່ລະປະເທດ.

ຂໍ້ ໕

ສິນຄ້າທີ່ມີກໍາເນີດໃນຣາຊອານາຈັກໄທ ຕາມບັນຊີແນບທ້າຍ ກ. ຈະນໍາເຂົ້າຣາຊອານາຈັກລາວ ແລະສິນຄ້າທີ່ມີກໍາເນີດໃນຣາຊອານາຈັກລາວ ຕາມບັນຊີແນບທ້າຍ ຂ. ຈະນໍາເຂົ້າຣາຊອານາຈັກໄທໄດ້.

ຂໍ້ ໖

ເມື່ອມີຄວາມຈໍາເປັນ ຄນະກັມະການຕລິດຊຶ່ງປະກອບດ້ວຍຜູ້ແທນຂອງພາຄີທັງສອງ ຈະຮ່ວມປະຊຸມປຶກສາຕາມຄໍາສເນີຂອງພາຄີຝ່າຍໃດຝ່າຍນຶ່ງ ເພື່ອພິຈາຣະນາສຶກສາບັນຫາຊຶ່ງອາດເກີດຂຶ້ນໃນການໃຊ້ບັງຄັບຄວາມຕົກລົງສບັບນີ້.

ຂໍ້ ໗

ຄວາມຕົກລົງນີ້ຈະມີຜົນໃຊ້ບັງຄັບໃນວັນລົງນາມ ແລະຈະໃຊ້ບັງຄັບຢູ່ນຶ່ງປີ ຄວາມຕົກລົງນີ້ຈະມີອາຍຸຕໍ່ໄປໂດຍອັດຕະໂນມັດເປັນປີ ໆ ໄປ ເວັ້ນແຕ່ຈະມີການບອກເລີກ ຊຶ່ງອາດກະທໍາໄດ້ໂດຍພາຄີຝ່າຍໃດຝ່າຍນຶ່ງ ແຈ້ງແກ່ອີກຝ່າຍນຶ່ງລ່ວງໜ້າສາມເດືອນ ກ່ອນວັນສິ້ນອາຍຸຂອງຄວາມຕົກລົງ.

ເພື່ອເປັນພຍານແກ່ການນີ້ ຜູ້ລົງນາມຂ້າງທ້າຍນີ້ ຊຶ່ງໄດ້ຮັບມອບອໍານາດອັນຖືກຕ້ອງຈາກຣັຖບານຂອງແຕ່ລະຝ່າຍ ໄດ້ລົງນາມແລະປະທັບຕຣາຄວາມຕົກລົງນີ້ໄວ້ເປັນສໍາຄັນ.

ທໍາ ນະ ກຸງເທພໆ ເມື່ອວັນທີ ໒໑ ເດືອນກໍຣະກະດາ ພຸທະສັກຣາຊສອງພັນຫ້າຮ້ອຍສອງ ກົງກັບຄຣິດສັກຣາຊນຶ່ງພັນເກົ້າຮ້ອຍຫ້າສິບເກົ້າ ຄູ່ກັນເປັນສອງສບັບ ເປັນພາສາໄທແລະພາສາລາວ ໂດຍມີຄໍາແປເປັນພາສາອັງກິດແລະພາສາຝຣັ່ງເສດ ແຕ່ລະພາສາເປັນຫລັກຖານເທົ່າທຽມກັນ.

ຝ່າຍຣັຖບານແຫ່ງຣາຊອານາຈັກລາວ

ຣັຖມົນຕຣີວ່າການກະຊວງການຕ່າງປະເທດ

ຝ່າຍຣັຖບານແຫ່ງຣາຊອານາຈັກໄທ

ຣັຖມົນຕຣີວ່າການກະຊວງການຕ່າງປະເທດ

# ບັນຊີແນບທ້າຍ ກ.

## ສິນຄ້າທີ່ມີກຳເນີດໃນປະເທດໄທ

------

| | |
|---|---|
| ເກືອ | ແປ້ງຫົວມັນຕົ້ນ |
| ນ້ຳອັດລົມ | ກາເຟ |
| ຢາສູບ | ໃບຊາ |
| ເຄື່ອງເຂືອນ | ນ້ຳປາ ນ້ຳຈິ້ມ |
| ເສັ້ນລ້ອນ | ປ່ານ ປໍ |
| ເຂົ້າໂພດ | ສະບູ |
| ພາພຍົນ | ນ້ຳມັນໝາກພ້າວ |
| ສິ່ງພິມ | ຊີ້ເຕີ້ງ |
| ໄມ້ຂີດໄຟ | ເຊືອກ |
| ຕິລະໄມ້ | ກະສອບປ່ານ |
| ໝາກແຕ້ງ | ເຄື່ອງດິນເຜົາ |
| ເມັດບົວ | ເຄື່ອງແກ້ວ |
| ຖົ່ວຕ່າງ ໆ | ຂວດແກ້ວ |
| ຫົວຜັກບົ່ວ ກະທຽມ ຜັກຕ່າງ ໆ | ລູອາ |
| | ເບັຽ |

<u>ບັນຊີແນບທ້າຍ ຂ.</u>

## ສິນຄ້າທີ່ມີກຳເນີດໃນຣາຊອານາຈັກລາວ

---

໑. <u>ສັດມີຊີວິດ</u>

- ຊ້າງ

໒. <u>ຜລິດພັນທີ່ມາຈາກສັດ</u>

- ກະດູກໝີ
- ເຂົາ ໜັງ ກະດູກ ຂອງຄວາຍແລະງົວ ແລະຂອງສັດປ່າ
- ເກັດລີ່ນ
- ງາຊ້າງ
- ເຂົາກວາງ

໓. <u>ຜລິດພັນທີ່ມາຈາກພືດ</u>

- ກາເຟ
- ຂີ້ຄັ່ງ
- ຂີ້ຊີ
- ໝາກແໜ່ງ
- ຢາງດິບ
- ນ້ຳມັນຢາງ
- ຢາງຕົ້ນໄມ້ອື່ນ ໆ ແລະສິ່ງທີ່ສະກັດຈາກພືດ
- ຂອງປ່າອື່ນ ໆ (ຍົກເວັ້ນຫວາຍ)
- ຝ້າຍ (~~ຍົກເວັ້ນຝ້າຍຄຳຮ້ອງ ຕ່ຳກວ່າເບີ ໔໐~~)
- ໝາກເດັດ
- ຖົ່ວມີເປືອກ
- ເຫັດແຫ້ງ
- ໄມ້ມີຄ່າ
- ວັດຖຸດິບເພື່ອໃຊ້ຍ້ອມຜ້າຫຼືຟອກໜັງ

໔. <u>ຜລິດພັນຈາກແຮ່</u>

- ຍິບຊ່
- ນາກ
- ປູນຂາວ